**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ຄະນະຈັດຕັ້ງສູນກາງພັກ

ຫ້ອງການ

ເລກທີ 896 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 31 ຕຸລາ 2025

**ໜັງສືແຈ້ງເຊີນປະມູນ**

1. ຫ້ອງການ ຄະນະຈັດຕັ້ງສູນກາງພັກ ຂໍເຊີນບັນດາບໍລິສັດ, ໂຮງພິມ ທີ່ສົນໃຈ ແລະ ມີເງື່ອນໄຂຄົບຖ້ວນ ເຂົ້າຍື່ນຊອງປະມູນ ໃນການຈັດພິມໃບຢັ້ງຢືນຫຼຽນ ດັ່ງນີ້:

   ❶ (**ພູດທີ 1**) ການພິມໃບຢັ້ງຢືນຫຼຽນກາລະນຶກ 50 ປີ, ກໍານົດໄລຍະການຈັດສົ່ງບໍ່ເກີນ 90 ວັນ.

   ❷ (**ພູດທີ 2**) ການພິມໃບຢັ້ງຢືນຫຼຽນກາລະນຶກ 50 ປີ, ກໍານົດໄລຍະການຈັດສົ່ງບໍ່ເກີນ 90 ວັນ.

2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30 /ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477 /ກງ, ລົງວັນທີ 13 ກຸມພາ 2019.

3. ການປະມູນນີ້ແມ່ນເປີດກວ້າງໃຫ້ທຸກໆ ບໍລິສັດ, ໂຮງພິມ ຂອງນິຕິບຸກຄົນພາຍໃນ ທີ່ດໍາເນີນທຸລະກິດຢູ່ໃນ ນະຄອນຫຼວງວຽງຈັນ, ມີໃບທະບຽນວິສາຫະກິດ, ໃບອະນຸຍາດດໍາເນີນທຸລະກິດ, ມີເລກປະຈໍາຕົວຜູ້ເສຍອາກອນ ແລະ ມີໃບຢັ້ງຢືນການປະຕິບັດພັນທະອາກອນ ຖືກຕ້ອງຕາມກົດໝາຍກໍານົດ.

4. ບໍລິສັດ, ໂຮງພິມ ທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນເອກະສານປະມູນຄົບຊຸດໄດ້ທີ່ ພະແນກຄຸ້ມຄອງ-ບໍລິຫານຫ້ອງການ ຄະນະຈັດຕັ້ງສູນກາງພັກ (ເບີໂທລະສັບ 020 22943483, 020 55016015) ບ້ານສີສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ໃນໂມງລັດຖະການ 8:00-11:30 ແລະ 13:30-16:00 ໂມງ, ນັບແຕ່ວັນທີ 29 ຕຸລາ 2025 ຫາ 18 ພະຈິກ 2025, ລາຄາຊອງປະມູນພູດລະ 2,000,000 ກີບ (ສອງລ້ານກີບ) ຈໍານວນເງິນດັ່ງກ່າວນີ້ຈະບໍ່ສົ່ງຄືນ ແລະ ການຊໍາລະຕ້ອງຈ່າຍເປັນເງິນສົດເທົ່ານັ້ນ.

5. ກໍານົດສົ່ງຊອງປະມູນ ຕ້ອງສົ່ງໃຫ້ພະແນກຄຸ້ມຄອງ-ບໍລິຫານ ຫ້ອງການ ຄະນະຈັດຕັ້ງສູນກາງພັກ ກ່ອນເວລາ 16:00 ໂມງຂອງວັນທີ 18 ພະຈິກ 2025, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. **ກໍານົດການເປີດຊອງປະມູນແມ່ນເວລາ 9:30 ໂມງ ຂອງວັນທີ 19 ພະຈິກ 2025 ທີ່ຫ້ອງປະຊຸມ ຊັ້ນ 3 ຕຶກຄະນະຈັດຕັ້ງສູນກາງພັກ (ໃນຮົ້ວຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ).** ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາ.

6. ເອກະສານປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນມາພ້ອມໃນມູນຄ່າ ບໍ່ໃຫ້ຫຼຸດ 2% (ສອງສ່ວນຮ້ອຍ) ຂອງມູນຄ່າປະມູນ ແລະ ໜັງສືຄໍ້າປະກັນການປະມູນ ຕ້ອງແມ່ນໜັງສືຄໍ້າປະກັນຂອງທະນາຄານ ທີ່ຖືກຕ້ອງຕາມແບບຟອມທີ່ກໍານົດໃນເອກະສານປະມູນ.

**ໝາຍເຫດ**: ໃນໃບແຈ້ງລາຄາ ໃຫ້ລະບຸຄວາມສາມາດຂອງໂຮງພິມ ໃນການຈັດພິມ ຈໍານວນໃບ/ວັນ.

**ເຊັນແທນ ຫົວໜ້າຫ້ອງການ**

**ຮອງຫົວໜ້າຫ້ອງການ**

ຄະນະຈັດຕັ້ງສູນກາງພັກ ຫ້ອງການ

ລັດສະໝີ ພົມພັກດີ